# ກອງທຶນຫຼຸດຜ່ອນຄວາມທຸກຍາກ
# ຈົດໝາຍຂ່າວ

ປະຈໍາໄຕມາດ

ເມສາ - ມິຖຸນາ
2022

**ມາຈາກຄວາມຕ້ອງການຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ**

## ສາລະບານ

ລົງຕິດຕາມ, ຊຸກຍູ້ສົ່ງເສີມວຽກງານໂພຊະນາການ ຢູ່ບ້ານເປົ້າໝາຍ ທລຍ ເມືອງກ້ອນ
ໜ້າທີ 1

**ຄະນະຊ່ຽວຊານທະນາຄານໂລກ ລົງເຄື່ອນໄຫວວຽກງານ ຢູ່ເມືອງກະລຶມ**
ໜ້າທີ 2

ການມາເຮັດວຽກຂອງຄະນະຊ່ຽວຊານທະນາຄານໂລກ ຮ່ວມກັບກອງທຶນຫຼຸດຜ່ອນຄວາມທຸກຍາກ, ກະຊວງກະສິກຳ ແລະ ປ່າໄມ້
ໜ້າທີ 3-4

**ຊີວິດການເປັນຢູ່ປະຊາຊົນເຂດຫ່າງໄກສອກຫຼີກ ເມືອງບຸນໃຕ້ ໄດ້ຮັບການພັດທະນາ**
ໜ້າທີ 5

ກອງປະຊຸມຄະນະຮັບຜິດຊອບວຽກງານສະໜອງສິນເຊື່ອ 4 ຮ່ວມ ເພື່ອແກ້ໄຂຄວາມທຸກຍາກ
ໜ້າທີ 6-7

**ສໍາເລັດຈັດຕັ້ງປະຕິບັດໂຄງການສ້ອມແປງເສັ້ນທາງເຂົ້າຫາເຂດການຜະລິດບ້ານບຸນໃຕ້**
ໜ້າທີ 8

ລົງຕິດຕາມຊຸກຍູ້ກິດຈະກຳປັບປຸງຊີວິດການເປັນຢູ່ ຂອງສະມາຊິກ ກຊກ
ໜ້າທີ 9

ຝຶກອົບຮົມເຕັກນິກການລ້ຽງສັດ ໃຫ້ສະມາຊິກ ກຊກ ຢູ່ເມືອງໃໝ່
ໜ້າທີ 10

ສໍາເລັດການນຳພາເຮັດຕົວຈິງກ່ຽວກັບການຄັດເລືອກຄອບຄົວຕົວແບບ,ການຢ້ຽມຢາມຄົວເຮືອນ, ຢ້ຽມຢາມສວນຄົວຢູ່ 3 ບ້ານ
ໜ້າທີ 11



## ລົງຕິດຕາມ, ຊຸກຍູ້ສົ່ງເສີມວຽກງານໂພຊະນາການ ຢູ່ບ້ານເປົ້າໝາຍ ທລຍ ເມືອງກ້ອນ

ໂດຍ: ລ່ຽນ ມາໄລທອງ, ໂພຊະນາການຂັ້ນບ້ານ

ໃນວັນທີ 18 ພຶດສະພາ 2022 ຜ່ານມາ ພະນັກງານໂພຊະນາການບ້ານ ກອງທຶນຫຼຸດຜ່ອນຄວາມທຸກຍາກ ເມືອງກ້ອນ, ແຂວງຫົວພັນ ໄດ້ລົງຕິດຕາມ, ຊຸກຍູ້ສົ່ງເສີມວຽກງານໂພຊະນາການໃຫ້ກຸ່ມສະມາຊິກໂພຊະນາການ ຢູ່ບ້ານ ກໍຟຸງ, ເມືອງກ້ອນ, ແຂວງຫົວພັນ ໄດ້ນຳພາການປຸງແຕ່ງອາຫານເສີມໃຫ້ແກ່ກຸ່ມແມ່ຍິງຖືພາ, ແມ່ລູກອ່ອນ, ເດັກອາຍຸ 0-5 ເດືອນ, ເດັກອາຍຸ 6-23 ເດືອນ ແລະ ແມ່ຜູ້ດູແລເດັກ ໃນນັ້ນ ລວມມີສະມາຊິກເຂົ້າຮ່ວມກິດຈະກຳທັງໝົດ 16 ຄົນ ປະກອບມີ: ແມ່ຖືພາ 6 ຄົນ ເດັກ 0-5 ເດືອນ 2 ຄົນ, ແມ່ລູກອ່ອນ 2 ຄົນ, ເດັກໃນເກນອາຍຸ 6-23 ເດືອນ 8 ຄົນ. ເປັນຍິງ 13 ຄົນ. ໃນການລົງຕິມຕາມ ຊຸກຍູ້ວຽກໂພຊະນາການໃນຄັ້ງນີ້ ໄດ້ນຳພາສະມາຊິກ ກຸ່ມໂພຊະນາການບ້ານ ສາທິດໃນການເຮັດເຂົ້າປຽກ ສໍາລັບເດັກ 6-23 ເດືອນ ໂດຍນໍາໃຊ້ສູດແປ້ງບົດ(ເຂົ້າຈ້າວ ກັບ ຖົ່ວຂຽວ) 50 ກະລາມ/ຄົນ/ຄາບ, ໝາກມ່ວງ 40 ກະລາມ/ຄົນ/ຄາບ ແລະ ນົມສົດ 125 ມິນລີລິດ/ຄົນ/ຄາບ ຊຶ່ງເປັນສູດອາຫານທີ່ໃຫ້ຄຸນຄ່າທາງດ້ານໂພຊະນາການທີ່ດີ. ສູດອາຫານດັ່ງນັ່ນຈະຊ່ວຍເຮັດໃຫ້ເດັກມີສຸຂະພາບແຂງແຮງ ໄດ້ຮັບອາຫານທີ່ມີໂພຊະນາການ, ຄຸນປະໂຫຍດຂອງໝວດອາຫານ ແລະ ຍັງເຮັດໃຫ້ຜູ້ເປັນແມ່ໄດ້ຮຽນຮູ້ ຂັ້ນຕອນ ແລະ ວິທີການປຸງແຕ່ງອາຫານໃນແຕ່ລະໄລຍະຂອງເດັກຢ່າງເລິກເຊິ່ງກວ່າເກົ່າ.

## ຄະນະຊ່ຽວຊານທະນາຄານໂລກ ລົງເຄື່ອນໄຫວວຽກງານ ຢູ່ເມືອງກະລຶມ

ໂດຍ: ແສງອາລຸນ ພິລາຈັນ, ກະຈາຍຂໍ້ມູນ-ຂ່າວສານ ສູ່ມວນຊົນ, ທລຍ ສູນກາງ

ໃນລະຫວ່າງ ວັນທີ 7-9 ມິຖຸນາ 2022 ຜ່ານມານີ້, ທ່ານ ນາງ ຊູຊານ ເຊັນ ຫົວໜ້າຝ່າຍບໍລິຫານວຽກງານ ພັດທະນາສັງຄົມ ແລະ ການມີສ່ວນຮ່ວມ, ທ່ານ ເບັນຈາມິນ ເບີກຣາດ ຜູ້ຊ່ຽວຊານອາວູໂຊ ດ້ານການ ພັດທະນາສັງຄົມ ແລະ ຫົວໜ້າທີມງານຈັດຕັ້ງປະຕິບັດໂຄງການ ພ້ອມດ້ວຍຄະນະຊ່ຽວຊານຈາກ ທະນາຄານໂລກ, ທ່ານ ພັດທະຄອນ ຄົນທະມີໄຊ ຜູ້ອໍານວຍການກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວວຽກງານ ຢູ່ເມືອງກະລຶມ, ແຂວງເຊກອງ ຊຶ່ງກ່ອນທີ່ຈະລົງ ຢ້ຽມຢາມຢູ່ເມືອງກະລຶມ ຄະນະດັ່ງກ່າວ ໄດ້ເຂົ້າພົບ ທ່ານ ນາງ ຈັນທອນ ມະຫາໄຊ, ຮອງເລຂາພັກ ແຂວງ, ຮອງເຈົ້າແຂວງ ແຂວງເຊກອງ ເພື່ອສະເໜີຈຸດປະສົງ ແລະ ແຜນການເຄື່ອນໄຫວວຽກງານຢູ່ ທ້ອງຖິ່ນໃນຄັ້ງນີ້ ໂດຍສະເພາະແມ່ນການເກັບກໍາຂໍ້ມູນ ເພື່ອກະກຽມໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວ ກັບການປ່ຽນແປງດິນຟ້າອາກາດ ຫຼື CLEAR.

ຫຼັງຈາກນັ້ນ, ຄະນະຊ່ຽວຊານຂອງທະນາຄານໂລກ ກໍໄດ້ລົງເຄື່ອນໄຫວເຮັດວຽກຢູ່ເມືອງກະລຶມ, ແຂວງ ເຊກອງ ໂດຍໃຫ້ກຽດເຂົ້າຮ່ວມຕ້ອນຮັບໂດຍ ທ່ານ ຄໍາປະເສີດ ດວຍບົວລະພາ, ຮອງເຈົ້າເມືອງ ເມືອງກະ ລຶມ, ຜູ້ຊີ້ນໍາຂົງເຂດເສດຖະກິດ; ທ່ານ ບຸນສໍາ ສີສັກ, ຮອງຫົວໜ້າພະແນກກະສິກໍາ ແລະ ປ່າໄມ້ ແຂວງ ເຊກອງ ພ້ອມດ້ວຍຄະນະ. ການລົງເຄື່ອນໄຫວເຮັດວຽກງານໃນຄັ້ງນີ້ ໄດ້ຢ້ຽມຢາມ ບັນດາໂຄງການ ທີ່ ທລຍ ໄດ້ໃຫ້ການສະໜັບສະໜູນ ໃນໄລຍະ ຜ່ານມາ ແລະ ພົບປະພໍ່ແມ່ປະຊາຊົນ ຢູ່ 3 ບ້ານ ຄື: ບ້ານ ລົງ, ບ້ານ ຈົງ ແລະ ບ້ານ ຕົ້ນຕື່ມ. ພ້ອມນັ້ນ ກໍໄດ້ເກັບກໍາຂໍ້ມູນຕົວຈິງ ເພື່ອກະກຽມໂຄງການ CLEAR ໂດຍຈະເນັ້ນໃສ່ການເຂົ້າເຖິງການບໍລິການຂັ້ນພື້ນຖານສໍາລັບການຜະລິດກະສິກໍາ, ການປັບປຸງຊີວິດ ການເປັນຢູ່ ແລະ ການສົ່ງເສີມໂພຊະນາການ.






# ການມາເຮັດວຽກ ຂອງຄະນະຊ່ຽວຊານທະນາຄານໂລກ ຮ່ວມກັບກອງທຶນຫຼຸດຜ່ອນຄວາມທຸກຍາກ, ກະຊວງກະສິກໍາ ແລະ ປ່າໄມ້

ໂດຍ: ແສງອາລຸນ ພິລາຈັນ, ກະຈາຍຂໍ້ມູນ-ຂ່າວສານ ສູ່ມວນຊົນ ທລຍ ສູນກາງ

ໂດຍປະຕິບັດຕາມໜັງສືແຈ້ງການຂອງຫົວໜ້າຫ້ອງການທະນາຄານໂລກ ປະຈໍາ ສປປ ລາວ ຄັ້ງວັນທີ 26 ພຶດສະພາ 2022 ຄະນະຊ່ຽວຊານ ຂອງທະນາຄານໂລກ ນໍາໂດຍ ທ່ານ ນາງ ຊູຊານ ເຊັນ, ຫົວໜ້າຝ່າຍບໍລິຫານວຽກງານພັດທະນາສັງຄົມ ແລະ ການມີສ່ວນຮ່ວມ, ທ່ານ ເບັນຈາມິນ ເບີກຮາດ ຜູ້ຊ່ຽວຊານອາ ວຸໂສດ້ານການພັດທະນາສັງຄົມ ແລະ ຫົວໜ້າທີມງານຈັດຕັ້ງປະຕິບັດໂຄງການ ພ້ອມດ້ວຍຄະນະຊ່ຽວຊານຈາກທະນາຄານໂລກ ແລະ ທ່ານ ພັດທະຄອນ ຄັນທະມີໄຊ ຜູ້ອໍານວຍການ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວວຽກງານ ຢູ່ ສປປ ລາວ ລະຫວ່າງວັນທີ 6-17 ມິຖຸນາ 2022.

ຈຸດປະສົງຂອງການມາເຮັດວຽກຂອງຄະນະຊ່ຽວຊານທະນາຄານໂລກໃນຄັ້ງນີ້ ແມ່ນເພື່ອປະເມີນຜົນຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດໂຄງການ ກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ເກັບກໍາຂໍ້ມູນເພື່ອກະກຽມໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (Community Livelihood Enhancement And Resilience (CLEAR). ການມາເຮັດວຽກຂອງຄະນະຊ່ຽວຊານທະນາຄານໂລກໃນຄັ້ງນີ້ ໄດ້ລົງເຄື່ອນໄຫວວຽກງານ ຢູ່ເມືອງກະລຶມ ແຂວງເຊກອງ; ເມືອງພູຄູນ ແຂວງຫຼວງພະບາງ; ແລະ ເມືອງຄໍາ, ເມືອງໜອງແຮດ ແຂວງຊຽງຂວາງ ແລະ ໄດ້ສໍາເລັດລົງດ້ວຍການຈັດກອງປະຊຸມສະຫຼຸບຜົນໄດ້ຮັບໃນວັນທີ 17 ພຶດສະພາ 2022 ໂດຍໄດ້ຮັບກຽດເປັນປະທານກອງປະຊຸມ ຂອງທ່ານ ທອງພັດ ວົງມະນີ, ຮອງລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້ ແລະ ທ່ານອະເລັກຊານເດີ ເຄຼມເມີ, ຫົວໜ້າຫ້ອງການທະນາຄານໂລກ ປະຈໍາ ສປປ ລາວ ແລະ ການເຂົ້າຮ່ວມຂອງຮອງຫົວໜ້າຫ້ອງການ ກະຊວງກະສິກໍາ ແລະ ປ່າໄມ້, ຜູ້ຕາງໜ້າກົມແຜນການ ແລະ ການເງິນ, ກົມພັດທະນາຊົນນະບົດ, ກະຊວງກະສິກໍາ ແລະ ປ່າໄມ້; ຜູ້ຕາງໜ້າຈາກກະຊວງການເງິນ; ຄະນະຊ່ຽວຊານຈາກ ທະນາຄານໂລກ; ແລະ ບັນດາຫົວໜ້າຂະແໜງການ ຂອງ ທລຍ ເຂົ້າຮ່ວມທັງໝົດ 31 ທ່ານ, ຍິງ 6 ທ່ານ.

ໃນກອງປະຊຸມສະຫຼຸບຜົນ, ທ່ານ ເບັນຈາມິນ ເບີກຮາດ ໄດ້ລາຍງານຜົນຂອງການລົງມາຕິດຕາມ ກວດກາປະເມີນຜົນ ຄວາມຄືບໜ້າວຽກງານໂຄງການຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ຊຶ່ງທ່ານໄດ້ຕີລາຄາສູງ ຕໍ່ກັບຜົນສໍາເລັດຂອງການຈັດຕັ້ງປະຕິບັດບັນດາວຽກງານ

ຕ່າງໆຂອງໂຄງການ ເຊັ່ນ: ວຽກງານປັບປຸງຊີວິດການເປັນຢູ່, ວຽກງານໂພຊະນາການ, ວຽກງານຕິດຕາມ-ປະເມີນຜົນ, ວຽກງານບໍລິຫານ-ການເງິນ, ວຽກງານຈັດຊື້-ຈັດຈ້າງ, ວຽກງານວິສະວະກຳ ແລະ ອື່ນໆ ທີ່ສາມາດບັນລຸໄດ້ຕາມລະດັບຄາດໝາຍ ແລະ ຕົວຊີ້ວັດຕ່າງໆ ທີ່ກຳນົດໄວ້; ທັງໄດ້ສະແດງໃຫ້ເຫັນວ່າ ຜົນງານຂອງໂຄງການ ໄດ້ປະກອບສ່ວນໂດຍກົງເຂົ້າໃນແຜນງານພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກ ຂອງກະຊວງກະສິກຳ ແລະ ປ່າໄມ້ ໃນໄລຍະຜ່ານມາ ກໍ່ຄືໂຄງການທີ່ກຳລັງຈັດຕັ້ງປະຕິບັດໃນປະຈຸບັນ. ນອກນັ້ນ ທ່ານ ເບັນຈາມິນ ຍັງໄດ້ລາຍງານວ່າ ການກະກຽມໂຄງການ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (CLEAR) ແມ່ນມີຄວາມຄືບໜ້າຫຼາຍ ແລະ ຄາດວ່າຈະໄດ້ຈັດຕັ້ງປະຕິບັດໂຄງການໃໝ່ນີ້ ໃນກາງປີ 2023 ໂດຍຈຸດປະສົງເປົ້າໝາຍຂອງໂຄງການດັ່ງກ່າວ ແມ່ນຈະເນັ້ນໃສ່ການເຂົ້າເຖິງການບໍລິການຂັ້ນພື້ນຖານສຳລັບການຜະລິດກະສິກຳ, ການປັບປຸງຊີວິດການເປັນຢູ່ ແລະ ການສົ່ງເສີມໂພຊະນາການ ເຊິ່ງປະກອບດ້ວຍ 5 ອົງປະກອບຄື: (1) ການໃຫ້ທຶນສະໜັບສະໜູນພັດທະນາເສດຖະກິດຂອງທ້ອງຖິ່ນ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ; (2) ການປັບປຸງຊີວິດການເປັນຢູ່ຂອງຊຸມຊົນ; (3) ການເຂົ້າເຖິງການບໍລິການດ້ານໂພຊະນາການ; (4) ການຄຸ້ມຄອງໂຄງການ ແລະ ການຕິດຕາມ-ປະເມີນຜົນ; ແລະ (5) ການຕອບສະໜອງທຶນເມື່ອເກີດເຫດການສຸກເສີນ.

ໃນຕອນທ້າຍ ຂອງກອງປະຊຸມສະຫຼຸບຜົນ ທ່ານ ທອງພັດ ວົງມະນີ, ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ມີຄຳເຫັນຕີລາຄາສູງຕໍ່ກັບຜົນສຳເລັດໃນການມາເຮັດວຽກຂອງຄະນະຊ່ຽວຊານຂອງທະນາຄານໂລກໃນຄັ້ງນີ້ ໂດຍຜົນສຳເລັດຂອງໂຄງການ ກອງທຶນຫຼຸດຜ່ອນຄວາມທຸກຍາກ ໄດ້ສະແດງໃຫ້ເຖິງການຮ່ວມມືອັນໜັກແໜ້ນ ລະຫວ່າງ ລັດຖະບານ ສປປ ລາວ ກໍ່ຄືກະຊວງກະສິກຳ ແລະ ປ່າໄມ້, ທະນາຄານໂລກ ແລະ ຄູ່ຮ່ວມພັດທະນາຕ່າງໆ ໂດຍຜ່ານກອງທຶນຫຼຸດຜ່ອນຄວາມທຸກຍາກ ຕອບສະໜອງຄວາມຕ້ອງການຕົວຈິງຂອງປະຊາຊົນບັນດາເຜົ່າ ແລະ ຍັງເປັນເງື່ອນໄຂພື້ນຖານອັນດີ ໃຫ້ແກ່ການກະກຽມໂຄງການໃໝ່ ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ກໍ່ຄື ໂຄງການ CLEAR ໃຫ້ມີຄວາມສອດຄ່ອງກັບທິດທາງນະໂຍບາຍແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງລັດຖະບານ ສປປ ລາວ.



# ຊີວິດການເປັນຢູ່ປະຊາຊົນເຂດຫ່າງໄກສອກຫຼີກ ເມືອງບຸນໃຕ້ ໄດ້ຮັບການພັດທະນາ

ໂດຍ: ວິໄລ ແກ້ວອິ່ນຄຳ, ທລຍ ເມືອງບຸນໃຕ້, ແຂວງຜົ້ງສາລີ



ໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) 3 ໄລຍະເພີ່ມທຶນ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຈັດຕັ້ງປະຕິບັດໂຄງການ ຢູ່ 7 ກຸ່ມບ້ານ, 15 ບ້ານ ຂອງເມືອງບຸນໃຕ້, ແຂວງຜົ້ງສາລີ ນັບຕັ້ງແຕ່ປີ 2021-2022, ກວມເອົາປະຊາກອນທັງໝົດ 7.645 ຄົນ, ຍິງ 3.735 ຄົນ, ຄອບຄົວທຸກ 1.160 ຄອບຄົວ, ຊົນເຜົ່າ 6.250 ຄົນ.

ຜ່ານການຈັດຕັ້ງປະຕິບັດໂຄງການດັ່ງກ່າວ ໃນໄລຍະ 2 ປີຜ່ານມາ ເຫັນວ່າ: ປະຊາຊົນພາຍໃນ 7 ກຸ່ມບ້ານ, 15 ບ້ານເປົ້າໝາຍ ທີ່ຢູ່ເຂດຫ່າງໄກສອກຫຼີກ ຂອງເມືອງບຸນໃຕ້ ແຂວງຜົ້ງສາລີ ໄດ້ຮັບການພັດທະນາທາງດ້ານເສດຖະກິດ ໂດຍຊີວິດການເປັນຢູ່ຂອງເຂົາເຈົ້າ ດີຂຶ້ນເທື່ອລະກ້າວ ພາຍຫລັງປະຊາຊົນພາຍໃນບັນດາບ້ານເປົ້າໝາຍ ໄດ້ເຂົ້າຮ່ວມຈັດຕັ້ງປະຕິບັດບັນດາກິດຈະກຳພັດທະນາ ໂດຍສະເພາະດ້ານປັບປຸງຊີວິດການເປັນຢູ່, ໂພຊະນາການ ແລະ ໂຄງລ່າງພື້ນຖານ. ວຽກງານປັບປຸງຊີວິດການເປັນຢູ່ ແມ່ນວຽກໜຶ່ງທີ່ສຳຄັນທີ່ໄດ້ປະກອບສ່ວນເຂົ້າໃນພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ປະຊາຊົນໃນຂອບເຂດພື້ນທີ່ເປົ້າໝາຍຂອງ ໂຄງການ ທລຍ. ຫ້ອງການ ທລຍ ຂັ້ນເມືອງ ປະຈຳເມືອງບຸນໃຕ້ ໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງຂັ້ນເມືອງ ລົງຈັດຕັ້ງກຸ່ມຊ່ວຍເຫຼືອກັນແກ້ໄຂຄວາມທຸກຍາກ (ກຊກ) ຢູ່ 15 ບ້ານ ຈຳນວນ 77 ກຸ່ມ, ມີສະມາຊິກທັງໝົດ 961 ຄົນ.

ໃນຕົ້ນປີ 2021 ທລຍ ໄດ້ມອບເງິນຕົ້ນທຶນທັງໝົດ 1,060,944,000 ກີບ ໃຫ້ 77 ກຸ່ມເຫຼົ່ານັ້ນ ໂດຍຜ່ານບັນຊີທະນາຄານທຸລະກິດປະຈຳເມືອງ ທີ່ມີຄະນະບໍລິຫານກອງທຶນຊ່ວຍເຫຼືອກັນແກ້ໄຂຄວາມທູກຍາກຂັ້ນບ້ານ ເປັນຜູ້ຄຸ້ມຄອງ ແລະ ບໍລິຫານ. ເງິນຕົ້ນທຶນຈຳນວນດັ່ງກ່າວ ສົມທົບກັບເງິນຝາກຂອງສະມາຊິກ ກຊກ ໃຊ້ເປັນທຶນກູ້ຢືມໃຫ້ແກ່ສະມາຊິກ ກຊກ ໂດຍ ສະມາຊິກ ກຊກ ຜູ້ທີ່ຈະກູ້ຢືມທຶນຈາກກອງທຶນຕ້ອງໄດ້ເຂົ້າຮ່ວມການຝຶກອົບຮົມດ້ານເຕັກນິກ-ວິຊາການຈາກນັກວິຊາການຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນຕົ້ນແມ່ນ ເຕັກນິກການປູກຝັງ, ລ້ຽງສັດ, ສັດຕະວະແພດ ເພື່ອຮັບປະກັນການນຳໃຊ້ທຶນກູ້ຢືມຢ່າງມີປະສິດທິພາບ. ນອກຈາກນີ້ ທລຍ ແລະ ຫ້ອງການເມືອງທີ່ກ່ຽວຂ້ອງ ຍັງໄດ້ເອົາໃຈໃສ່ປຸກລະດົມ ຊຸກຍູ້ ສະມາຊິກ ກຊກ ຝາກເງິນປະຫຍັດຂອງຕົນ ເພື່ອນຳໃຊ້ໃນຍາມເຈັບເປັນ, ສົ່ງເສີມລູກຮຽນໜັງສື, ຊື້ເຂົ້າກິນ, ສ້ອມແປງ ແລະ ກໍ່ສ້າງເຮືອນຫຼັງໃໝ່ ແລະ ປ່ອຍກູ້ເຮັດກິດຈະກຳສ້າງລາຍຮັບ. ຜ່ານການປຸກລະດົມການທ້ອນເງິນ ຜ່ານມາເຫັນວ່າ ສະມາຊິກ ໄດ້ມີການຕື່ນຕົວເຂົ້າຮ່ວມການຝາກເງິນເປັນປົກກະຕິ ເຊິ່ງມາຮອດປັດຈຸບັນ ໃນ 15 ບ້ານເປົ້າໝາຍ ມີເງິນຝາກສະສົມທັງໝົດ 140,059,000 ກີບ. ຄຽງຄູ່ກັບການການປຸກລະດົມຊຸກຍູ້ໃຫ້ສະມາຊິກຝາກເງິນປະຫຍັດໃນແຕ່ລະເດືອນແລ້ວ ທລຍ ຍັງໄດ້ລົງຕິດຕາມການປ່ອຍກູ້ເງິນຕົ້ນທຶນ ໃຫ້ແກ່ສະມາຊິກ ກຊກ ຢູ່ 15 ບ້ານເປົ້າໝາຍ, ມາຮອດປັດຈຸບັນ ສະມາຊິກ ກຊກ 548 ຄົນ ກວມເອົາ 57.02% ຂອງຈຳນວນສະມາຊິກທັງໝົດ ໄດ້ກູ້ຢືມເງິນຈາກກອງທຶນ ໄປເຮັດກິດຈະກຳ ປູກຝັງ, ລ້ຽງສັດ, ຫັດຖະກຳ ລວມເປັນເງິນທັງໝົດ 921,828,000 ກີບ ກວມເອົາ 86,88% ຂອງເງິນຕົ້ນທຶນທັງໝົດ; ໃນນັ້ນ ສະມາຊິກ 29 ຄົນ ກູ້ຢືມເງິນຈຳນວນ 27,000,000 ສຳຫຼັບລ້ຽງແບ້, 161 ຄົນ ກູ້ຢືມເງິນ 366,748,000 ກີບ ເພື່ອລ້ຽງໝູ, 262 ຄົນ ກູ້ຢືມເງິນ 397,080,000 ກີບ ເພື່ອລ້ຽງສັດປີກ, 37 ຄົນ ກູ້ຢືມເງິນ 91,000,0,000 ກີບ ເພື່ອລ້ຽງປາ, 41 ຄົນ ກູ້ຢືມເງິນ 41,000,000 ກີບ ເພື່ອຕ່ຳຫູກ, 15 ຄົນ ກູ້ຢືມເງິນ 26,000,000 ກີບ ເພື່ອຄ້າຂາຍຍ່ອຍ, 2 ຄົນ ກູ້ຢືມເງິນ2,000,000 ກີບ ເພື່ອປູກຫຍ້າລ້ຽງສັດ, ແລະ 1 ຄົນ ກູ້ຢືມເງິນ 1,000,000 ກີບ ເພື່ອປູກເຫັດ. ສຳລັບ ການປ່ອຍກູ້ຈາກເງິນຝາກຂອງສະມາຊິກ ກຊກ ແມ່ນໄດ້ປ່ອຍກູ້ໃຫ້ 27 ຄົນ ເປັນເງິນທັງໝົດ 76,000,000 ກວ່າກີບ ເທົ່າ 54.26% ຂອງຈຳນວນເງິນຝາກສະສົມ; ໃນນັ້ນ ສະມາຊິກ 5 ຄົນ ກູ້ຢືມ 10,000,000 ກີບ ເພື່ອການສຶກສາຂອງລູກ, 12 ຄົນ ກູ້ຢືມ 36,000,000 ກີບ ເພື່ອປິ່ນປົວພະຍາດ ແລະ 10 ຄົນ ກູ້ຢືມ 30,000,000 ກີບ ເພື່ອຊື້ເຂົ້າກິນ.

ຜ່ານການນຳໃຊ້ເງິນກູ້ຢືມຈາກ ກອງທຶນ ກຊກ ຂອງບ້ານ, ສະມາຊິກ ກຊກ ສາມາດສ້າງລາຍຮັບຈາກກິດຈະກຳຕ່າງໆ ໄດ້ຫຼາຍກວ່າ 400,000,000 ກວ່າກີບ ເຮັດໃຫ້ສະມາຊິກ ກຊກ ມີຊີວິດການເປັນຢູ່ດີຂຶ້ນກວ່າເກົ່າ ແລະ ເຮັດໃຫ້ຄອບຄົວຄ່ອຍຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ.

ກຊກ ທັງໝົດ 685 ຄົນ ທີ່ກູ້ຢືມເງິນຈຳນວນ 1 ຕື້ກວ່າກີບ ເພື່ອໄປເຮັດກິດຈະກຳສ້າງລາຍຮັບຕ່າງໆນັ້ນ ຈະມີກຳໄລປະມານ 50% ຂອງເງິນຕົ້ນທຶນ ຫລັງຈາກທີ່ສົ່ງເງິນຕົ້ນທຶນ ແລະ ດອກເບ້ຍແລ້ວ. ອັນນີ້ ສະແດງໃຫ້ເຫັນວ່າ ກອງທຶນ ກຊກ ມີຄວາມສຳຄັນຫຼາຍຕໍ່ແກ່ສະມາຊິກ ກຊກ ເຊິ່ງຈະຊ່ວຍໃຫ້ເຂົາເຈົ້າ ສ້າງລາຍຮັບໃຫ້ແກ່ຄອບຄົວ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ.




## ກອງປະຊຸມຄະນະຮັບຜິດຊອບວຽກງານສະໜອງສິນເຊື່ອ 4 ຮ່ວມ ເພື່ອແກ້ໄຂຄວາມທຸກຍາກ

ໃນວັນທີ 23 ພຶດສະພາ 2022 ທີ່ຫ້ອງປະຊຸມພະແນກກະສິກຳ ແລະ ປ່າໄມ້ ແຂວງອຸດົມໄຊ ໄດ້ເປີດກອງປະຊຸມຄະນະຮັບຜິດຊອບວຽກງານສະໜອງສິນເຊື່ອ 4 ຮ່ວມ ເພື່ອແກ້ໄຂຄວາມທຸກຍາກຂຶ້ນ ໂດຍການເປັນປະທານຮ່ວມຂອງ ທ່ານ ທອງພັດ ວົງມະນີ, ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ແລະ ທ່ານ ອ່ອນແກ້ວ ອຸ່ນອາລົມ, ຮອງເຈົ້າແຂວງອຸດົມໄຊ ແລະ ມີຜູ້ແທນຈາກຄະນະຮັບຜິດຊອບວຽກງານສະໜອງສິນເຊື່ອ 4 ຮ່ວມ ເພື່ອແກ້ໄຂຄວາມທຸກຍາກ ຂັ້ນສູນກາງ ແລະ ຂັ້ນແຂວງ ແລະ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງຫຼາ, ເມືອງນາໝໍ້, ແລະ ເມືອງງາ ທີ່ເປັນເມືອງເປົ້າໝາຍທົດລອງການຈັດຕັ້ງປະຕິບັດວຽກງານສະໜອງສິນເຊື່ອ 4 ຮ່ວມ ເຂົ້າຮ່ວມທັງໝົດ 54 ທ່ານ, ຍິງ 10 ທ່ານ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ ແມ່ນເພື່ອປຶກສາຫາລື, ວາງແຜນການ ແລະ ແບ່ງຄວາມຮັບຜິດຊອບພາຍໃນຄະນະຜິດຊອບວຽກງານການສະໜອງສິນເຊື່ອ 4 ຮ່ວມ ເພື່ອແກ້ໄຂຄວາມທຸກຍາກ ພ້ອມທັງຮັບຟັງການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃນບັ້ນທົດລອງຢູ່ແຂວງອຸດົມໄຊ.

ພາຍຫຼັງຄະນະປະທານ ກ່າວເປີດກອງປະຊຸມຢ່າງເປັນທາງການແລ້ວ ຈາກນັ້ນ ກອງປະຊຸມ ໄດ້ດຳເນີນໄປຕາມວາລະຄື:

- ຜ່ານຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບວຽກງານສະໜອງສິນເຊື່ອ 4 ຮ່ວມ ເພື່ອແກ້ໄຂຄວາມທຸກຍາກ ສະບັບເລກທີ 1327/ກປ, ລົງວັນທີ 15 ຕຸລາ 2021;
- ຮັບຟັງການນຳສະເໜີແຜນທົດລອງຈັດຕັ້ງປະຕິບັດວຽກງານສະໜອງສິນເຊື່ອ 4 ຮ່ວມ ເພື່ອແກ້ໄຂຄວາມທຸກຍາກ ແລະ ລາຍງານຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດວຽກງານ ນັບຕັ້ງແຕ່ມີຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດ ຊອບວຽກງານສະໜອງສິນເຊື່ອ 4 ຮ່ວມ ເພື່ອແກ້ໄຂຄວາມທຸກຍາກ ສະບັບເລກທີ 1327/ກປ, ລົງວັນທີ 15 ຕຸລາ 2021;
- ຮັບຟັງການລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານສະໜອງສິນເຊື່ອ 4 ຮ່ວມ ບັ້ນທົດລອງຢູ່ 3 ເມືອງເປົ້າໝາຍ ຄື: ເມືອງຫຼາ, ເມືອງນາໝໍ້, ແລະ ເມືອງງາ;
- ຮັບຟັງການນຳສະເໜີນະໂຍບາຍສະໜອງສິນເຊື່ອຂອງທະນາຄານນະໂຍບາຍ ແລະ ແຜນການສະໜອງສິນເຊື່ອ ໃນຂອບຮ່ວມມື 4 ຮ່ວມ ແລະ ພາລະບົດບາດໂດຍລວມຂອງທະນາຄານນະໂຍບາຍ;
- ຮັບຟັງການນຳສະເໜີຮ່າງຄຳແນະນຳການຈັດຕັ້ງປະຕິບັດຂອບຮ່ວມມືການສະໜອງສິນເຊື່ອ 4 ຮ່ວມ ແກ້ໄຂຄວາມທຸກຍາກ.

ຫຼັງຈາກນັ້ນ, ຄະນະປະທານ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ປະກອບຄຳເຫັນ ປຶກສາຫາລືຮ່ວມກັນ ໂດຍອີງໃສ່ຄຳຖາມເຈາະຈີ້ມ ດັ່ງລຸ່ມນີ້:

1) ການປະສານງານ ລະຫວ່າງທະນາຄານນະໂຍບາຍ ແລະ ຄະນະຮັບຜິດຊອບວຽກງານສະໜອງສິນເຊື່ອ 4 ຮ່ວມ, ລະຫວ່າງທີມງານຂັ້ນ

ແຂວງ ແລະ ທີມງານຂັ້ນເມືອງ ມີຂໍ້ຫຍຸ້ງຍາກຫຍັງແນ່?

2) ການສ້າງກຸ່ມຕົວແບບ ຜ່ານມາມີດ້ານດີ, ດ້ານອ່ອນ ແນວໃດ ແລະ ຈະແກ້ໄຂແນວໃດ?

3) ການສ້າງແຜນສິນເຊື່ອ ແລະ ການປ່ອຍສິນເຊື່ອ ມີຂໍ້ດີ ແລະ ຂໍ້ຄົງຄ້າງຫຍັງແນ່ ແລະ ຈະມີວິທີແກ້ໄຂແນວໃດ?

4) ການອໍານວຍຄວາມສະດວກດ້ານອື່ນໆ ເປັນຕົ້ນແມ່ນການສະໜອງແນວພັນພືດ ສັດ, ການກັກກັນພືດ ສັດ, ແລະ ການປິ່ນປົວ ຈະມີວິທີການແນວໃດ?

5) ເງື່ອນໄຂການເຂົ້າເຖິງແຫຼ່ງທຶນ ສໍາລັບຜູ້ຕິດຢາເສບຕິດ ແມ່ນສາມາດເຂົ້າເຖິງສິນເຊື່ອ 4 ຮ່ວມ ໄດ້ບໍ ເພາະຄົນກຸ່ມນີ້ ກໍແມ່ນຄົນທຸກຍາກຄືກັນເຊິ່ງກໍຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ?

6) ບັນຫາໜີ້ຄ້າງຈ່າຍ ຍ້ອນຜົນຜະລິດຂອງປະຊາຊົນ ເສຍຫາຍ ຍ້ອນພະຍາດລະບາດ ຈະມີວິທີການຊ່ວຍແນວໃດ?

ຜ່ານການປຶກສາຫາລື ແລະ ແລກປ່ຽນຄໍາຄິດເຫັນຂອງຜູ້ເຂົ້າຮ່ວມກອງປະຊຸມຢ່າງກົງໄປກົງມາ ຫຼັງຈາກນັ້ນ ທ່ານປະທານກອງປະຊຸມ ໄດ້ໃຫ້ທິດຊີ້ນໍາ ເຊິ່ງສາມາດສະຫຼຸບສັງລວມໄດ້ ດັ່ງນີ້:

1) ເຫັນດີ ຮັບຮອງເອົາແຜນທົດລອງຈັດຕັ້ງປະຕິບັດວຽກງານສະໜອງສິນເຊື່ອ 4 ຮ່ວມ ເພື່ອແກ້ໄຂຄວາມທຸກຍາກ ຢູ່ແຂວງອຸດົມໄຊ;

2) ເຫັນດີ ໃຫ້ຈັດກອງປະຊຸມວິຊາການຂຶ້ນ ເພື່ອຜ່ານຄໍາແນະນໍາການຈັດຕັ້ງປະຕິບັດຂອບຮ່ວມມືການສະໜອງສິນເຊື່ອ 4 ຮ່ວມ ເພື່ອແກ້ໄຂຄວາມທຸກຍາກ ໃຫ້ລະອຽດເລິກເຊິ່ງ ແລະ ໃຫ້ທ້ອງຖິ່ນມີຄໍາເຫັນປະກອບໃສ່ ເພື່ອໃຫ້ ຄໍາແນະນໍາດັ່ງກ່າວ ມີຄວາມເໝາະສົມ ແລະ ສາມາດນໍາໃຊ້ໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

3) ເຫັນດີ ໃຫ້ຄົ້ນຄວ້າ ແລະ ປັບປຸງຄືນ ຂໍ້ຕົກລົງຂອງ ຄະນະຮັບຜິດຊອບວຽກງານສະໜອງສິນເຊື່ອ 4 ຮ່ວມ ເພື່ອແກ້ໄຂຄວາມທຸກຍາກ ເນື່ອງຈາກຫຼາຍທ່ານໃນຄະນະດັ່ງກ່າວ ໄດ້ຖືກມອບໝາຍໃຫ້ໄປຮັບໜ້າທີ່ຢູ່ບ່ອນປະຈໍາການ ໃໝ່;

4) ມອບໃຫ້ພະແນກກະສິກໍາ ແລະ ປ່າໄມ້ ແຂວງອຸດົມໄຊ ແລະ ທະນາຄານນະໂຍບາຍ ສືບຕໍ່ພົວພັນປະສານງານກັນໃຫ້ໄດ້ປ່ອຍສິນເຊື່ອ ທັນຕາມລະດູການຜະລິດ ແລະ ພ້ອມທັງລົງຕິດຕາມຊຸກຍູ້ກຸ່ມຜະລິດຢ່າງໃກ້ຊິດ ເພື່ອສ້າງເປັນຕົວແບບທີ່ເຂັ້ມແຂງ;

5) ມອບໃຫ້ຄະນະຮັບຜິດຊອບວຽກງານສະໜອງສິນເຊື່ອ 4 ຮ່ວມ ຂັ້ນສູນກາງ ແລະ ທະນາຄານນະໂຍບາຍ ຄົ້ນຄວ້າ ສະໜັບສະໜູນທາງດ້ານທຶນຮອນ ໃນການຊື້ອຸປະກອນເຄື່ອງມືທີ່ຈໍາເປັນໃນການສ້າງຕາໜ່າງກັກກັນພືດ ແລະ ຕາໜ່າງສັດຕະວະແພດ ເພື່ອປ້ອງກັນ ແລະ ປິ່ນປົວພະຍາດພືດ ແລະ ສັດລ້ຽງ ຂອງຊາວກະສິກອນ;

6) ເພື່ອສືບຕໍ່ ແກ້ໄຂບັນຫາການປ່ອຍສິນເຊື່ອແບບກະແຈກກະຈາຍບໍ່ໄປຕາມຈຸດສຸມອັນດຽວກັນ ແລະ ກໍໃຫ້ເກີດມີໜີ້ເສຍຫຼາຍ ດັ່ງນັ້ນຂະແໜງກະສິກໍາ ແລະ ປ່າໄມ້ ແຕ່ລະຂັ້ນນັບແຕ່ກົມວິຊາການ, ພະແນກກະສິກໍາ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ຕ້ອງໄດ້ສຸມໃສ່ແນະນໍາດ້ານວິຊາການ ໃຫ້ກຸ່ມຜະລິດຢ່າງເປັນລະບົບຕໍ່ເນື່ອງລຽນຕິດ ເພື່ອຫັນຈາກການຜະລິດພໍກຸ້ມຢູ່ກຸ້ມກິນ ໄປສູ່ການຜະລິດເປັນສິນຄ້າ;

7) ການຈັດຕັ້ງປະຕິບັດວຽກງານສະໜອງສິນເຊື່ອ 4 ຮ່ວມ ຕ້ອງໃຫ້ສອດຄ່ອງກັບວາລະແຫ່ງຊາດ ເຊິ່ງຂະແໜງກະສິກໍາ ແລະ ປ່າໄມ້ມີ 2 ໜ້າວຽກ ຄື: ການຜະລິດຄໍ້າປະກັນສະບຽງອາຫານ ແລະ ການຜະລິດທົດແທນການນໍາເຂົ້າ ແລະ ສົ່ງອອກ;

8) ມອບໃຫ້ ຄະນະສະໜອງສິນເຊື່ອ 4 ຮ່ວມ ຂັ້ນສູນກາງ ປະສານກັບກົມປູກຝັງ ເພື່ອເອົາບັນຊີລາຍການສິນຄ້າທີ່ ສປປ ລາວ ສາມາດສົ່ງອອກໄປປະເທດຄູ່ຄ້າ ເປັນຕົ້ນແມ່ນ ສປ ຈີນ ແລະ ສສ ຫວຽດນາມ ເພື່ອໃຫ້ຊຸກຍູ້ຜູ້ຜະລິດ, ກຸ່ມຜະລິດ ໄປຕາມພືດ ຫຼືສັດ ທີ່ຢູ່ໃນລາຍການເຫຼົ່ານັ້ນ ແລະ ສະເໜີໃຫ້ກົມພັດທະນາຊົນນະບົດ, ກົມສົ່ງເສີມ ແລະ ສະຫະກອນ ແລະ ກອງທຶນຫຼຸດຜ່ອນຄວາມທຸກຍາກ ຄົ້ນຄວ້າຄວາມເປັນໄປໄດ້ໃນການສະໜອງງົບປະມານຈາກບັນດາ ໂຄງການກ່ຽວຂ້ອງທີ່ກໍາລັງຈັດຕັ້ງປະຕິບັດຢູ່ຫຼື ໂຄງການທີ່ກໍາລັງສະເໜີໃໝ່ມາຊຸກຍູ້, ໃຫ້ການແນະນໍາ, ແລະ ຕິດຕາມກວດກາ ຢູ່ເຂດເປົ້າໝາຍທົດລອງສະໜອງສິນເຊື່ອ 4 ຮ່ວມ ຢູ່ແຂວງອຸດົມໄຊ.

# ສຳເລັດຈັດຕັ້ງປະຕິບັດໂຄງການສ້ອມແປງເສັ້ນທາງເຂົ້າຫາເຂດການຜະລິດ ບ້ານບຸນໃຕ້

ໂດຍ: ວິໄລ ແກ້ວອື່ນຄຳ, ຫົວໜ້າທີມງານ ທລຍ ເມືອງບຸນໃຕ້



ໃນວັນທີ 23 ມິຖຸນາ 2022 ຜ່ານມາ, ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ເມືອງບຸນໃຕ້, ແຂວງຜົ້ງສາລີ ສົມທົບ ການນຳຂັ້ນເມືອງ, ຂະແໜງການທີ່ກ່ຽວຂ້ອງ ແລະ ທີມງານຂັ້ນບ້ານ ໄດ້ລົງກວດກາຜົນສຳເລັດຂອງໂຄງການສ້ອມແປງເສັ້ນທາງຫາເຂດການຜະລິດ ບ້ານບຸນໃຕ້ ເຊິ່ງເຂົ້າຮ່ວມໃນການກວດກາຜົນສຳເລັດໂຄງການສ້ອມແປງເສັ້ນທາງເຂົ້າຫາເຂດການຜະລິດໃນຄັ້ງນີ້ ໂດຍທ່ານ ບຸນແພງ ລາວລີ, ຄະນະປະຈຳພັກເມືອງ, ຮອງເຈົ້າເມືອງ ເມືອງບຸນໃຕ້ ຜູ້ຊີ້ນຳວຽກງານ ທລຍ, ຕາງໜ້າຈາກຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ, ພ້ອມດ້ວຍອົງການປົກຄອງທ້ອງຖິ່ນ, ທີມງານຂັ້ນບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ ເຂົ້າຮ່ວມທັງໝົດ 150 ຄົນ, ຍິງ 60 ຄົນ.

ທ່ານ ວິໄລ ແກ້ວອື່ນຄຳ, ຫົວໜ້າ ທີມງານ ທລຍ ເມືອງບຸນໃຕ້ ໄດ້ລາຍງານວ່າ: ໂຄງການສ້ອມແປງເສັ້ນທາງ ເຂົ້າຫາເຂດການຜະລິດ ບ້ານບຸນໃຕ້ ເມືອງບຸນໃຕ້ ແຂວງ ຜົ້ງສາລີ ໄດ້ຮັບທຶນສະໜັບສະໜູນຈາກ ທະນາຄານໂລກ ກໍຄືລັດຖະບານ ແຫ່ງ ສປປ ລາວ ຜ່ານກອງທຶນຫຼຸດຜ່ອນຄວາມທຸກຍາກ ຮອບວຽນ 18 (2022) ມີມູນຄ່າທັງໝົດ132.536.896 ກີບ, ໃນນັ້ນ ມູນຄ່າວ່າງຈ້າງກົນຈັກ 103.606.317 ກີບ ແລະ ຊຸມຊົນໄດ້ປະກອບສ່ວນ ແຮງງານ ຖາງແລວທາງ ແລະ ເກັບມ້ຽນສິ່ງເສດເຫຼືອຈາກການກໍ່ສ້າງ ຄິດເປັນມູນຄ່າ 7.540.000 ກີບ. ເສັ້ນທາງດັ່ງກ່າວ ປະກອບມີ 2 ຈຸດ ຄື: ຈຸດທີ 1 ຈຸດພູຜາໂງ່ນ ໜ້າທາງກ້ວາງ 4 ແມັດ, ມີຄວາມຍາວ 2.800 ແມັດ ແລະ ຈຸດທີ 2 ຫ້ວຍຫວາຍ ໜ້າທາງກ້ວາງ 4 ແມັດ, ມີຄວາມຍາວ 1.400 ແມັດ ລວມຄວາມຍາວທັງ 2 ຈຸດ 4.200 ແມັດ. ໜ້າວຽກຫຼັກ ປະກອບມີ ບຸກເບີກພື້ນທີ ແລະ ປັບແຕ່ງໜ້າທາງ, ປັບເກດໜ້າທາງ ແລະ ຮ່ອງລະບາຍນ້ຳ, ຕັດຈຸດຄ້ອຍຊັນ ແລະ ອື່ນໆ ເຊິ່ງໄດ້ເລີ່ມກໍ່ສ້າງມາແຕ່ວັນທີ 15 ມິຖຸນາ 2022 ແລະ ສຳເລັດໃນວັນທີ 23 ມິຖຸນາ 2022. ໂຄງການດັ່ງກ່າວ ເປັນໂຄງການໜຶ່ງທີ່ຈະປະກອບສ່ວນເຂົ້າໃນການຈັດຕັ້ງຜັນຂະຫຍາຍຍຸດທະສາດການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ແກ່ປະຊາຊົນບັນດາເຜົ່າ ເວົ້າລວມ, ເວົ້າສະເພາະແມ່ນ ເພື່ອປັບປຸງການເຂົ້າເຖິງການບໍລິການ ແລະ ຍົກລະດັບການຜະລິດ ເພື່ອເປັນສິນຄ້າສ້າງລາຍຮັບໃຫ້ແກ່ຄອບຄົວໃນເຂດບ້ານເປົ້າໝາຍໂຄງການ ທລຍ ເພື່ອໂພຊະນາການທີ່ດີຂຶ້ນ ກ້າວໄປສູ່ການຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ.

ພາຍຫຼັງກໍ່ສ້າງສຳເລັດ ໂຄງການສ້ອມແປງເສັ້ນທາງເຂົ້າຫາເຂດການຜະລິດ ປະຊາຊົນບ້ານບຸນໃຕ້ ແລະ ປະຊາຊົນອີກ 2 ບ້ານໃກ້ຄຽງ ຄື: ບ້ານໂພທອງ ແລະ ບ້ານໂນນບຸນກາງ ຫຼາຍກວ່າ 750 ຄົນ, ຍິງ 420 ຄົນ, ຊົນເຜົ່າ 535 ຄົນ ແລະ ຜູ້ທຸກຍາກ 460 ຄົນ ຈະໄດ້ຊົມໃຊ້ເສັ້ນທາງດັ່ງກ່າວ.

# ລົງຕິດຕາມຊຸກຍູ້ກິດຈະກຳປັບປຸງຊີວິດການເປັນຢູ່ ຂອງສະມາຊິກ ກຊກ

ໂດຍ: ຄຳຫລ້າ ສຸວັນນາ, ພະນັກງານ ປັບປຸງຊີວິດການເປັນຢູ່ ຂັ້ນບ້ານ, ທລຍ ເມືອງຂວາ

ໃນວັນທີ 7 ມິຖຸນາ 2022 ຜ່ານມາ, ພະນັກງານ ປັບປຸງຊີວິດການເປັນຢູ່ ຂັ້ນບ້ານ ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ປະຈຳເມືອງຂວາ, ແຂວງຜົ້ງສາລີ ໄດ້ລົງຕິດຕາມຊຸກຍູ້ກິດຈະກຳ ປັບປຸງຊີວິດການເປັນຢູ່ ຂອງສະມາຊິກກຸ່ມຊ່ວຍເຫຼືອກັນແກ້ໄຂຄວາມທຸກຍາກ (ກຊກ) ບ້ານສິບອັດ, ເມືອງຂວາ, ແຂວງຜົ້ງສາລີ. ໃນການລົງຊຸກຍູ້ຄັ້ງນີ້ ໄດ້ຕິດຕາມ-ກວດກາ ການຝາກເງິນ, ການຄຸ້ມຄອງກອງທຶນ ໂດຍສະເພາະ ການລົງບັນຊີ ແລະ ເກັບກຳຂໍ້ມູນການດຳເນີນກິດຈະກຳສ້າງລາຍຮັບ ຂອງສະມາຊິກ ກຊກ, ຊຶ່ງມີສະມາຊິກ ກຊກ ເຂົ້າຮ່ວມທັງໝົດ 36 ຄົນ, ຍິງ 34 ຄົນ.

ການລົງຊຸກຍູ້ຕິດຕາມໃນຄັ້ງນີ້ ເຫັນວ່າ ການລົງບັນຊີແຕ່ລະປະເພດ ຂອງຄະນະບໍລິຫານ ກຊກ (ຄບກ) ມີຄວາມຖືກຕ້ອງ ແລະ ໂປ່ງໃສ. ຈາກການລາຍງານຂອງຄະນະ ຄບກ ແລະ ສະມາຊິກ ກຊກ ມາຮອດປັດຈຸບັນນີ້ ບ້ານສິບອັດ ໄດ້ຮັບເງິນທຶນສະໜັບສະໜູນຈາກ ທລຍ ຈຳນວນ 49.680.000 ກີບ ແລະ ໄດ້ປ່ອຍກູ້ໃຫ້ສະມາຊິກ 22 ຄົນ ລວມມູນຄ່າ 45.000.000 ກີບ (ເງິນທຶນຍັງເຫຼືອຢູ່ບັນຊີ 4.680.000 ກີບ). ການຝາກເງິນຂອງສະມາຊິກ ກຊກ ບ້ານສິບອັດ ໃນເດືອນມິຖຸນາ 2022 ນີ້ ມີເງິນຝາກ 495.000 ກີບ ໂດຍສະມາຊິກຜູ້ຝາກເງິນທັງໝົດ 36 ຄົນ ແລະ ມາຮອດເດືອນມິຖຸນາ 2022 ນີ້ ມີເງິນຝາກສະສົມທັງໝົດ 12.245.000 ກີບ ແລະ ໄດ້ປ່ອຍກູ້ໃຫ້ສະມາຊິກ 2 ຄົນ ມູນຄ່າ 7.000.000 ກີບ ເພື່ອໄປເຮັດກິດຈະກຳສ້າງລາຍຮັບ.

ມາຮອດປັດຈຸບັນນີ້ ສະມາຊິກ ກຊກ ຈຳນວນ 14 ຄົນ ໄດ້ມີລາຍຮັບຈາກການຂາຍໝູ 31 ໂຕ ຫຼື ເທົ່າກັບ 1.160 ກິໂລກຣາມ, ຄິດເປັນເງິນທັງໝົດ 36.283.000 ກີບ ຊຶ່ງສາມາດສົ່ງເງິນຕົ້ນທຶນຄືນໃຫ້ກຸ່ມທ້ອນເງິນ ກຊກ ຈຳນວນໜຶ່ງ ແລະ ຍັງມີໝູແມ່ພັນ-ພໍ່ພັນ ແລະ ລູກໝູນ້ອຍຈຳນວນໜຶ່ງ ທີ່ເປັນຕົ້ນທຶນ ແລະ ສາມາດຂະຫຍາຍໄດ້ຕື່ມອີກ.

ນອກຈາກນີ້, ພະນັກງານປັບປຸງຊີວິດການເປັນຢູ່ ຂັ້ນບ້ານ ທລຍ ຍັງໄດ້ແນະນຳໃຫ້ຄວາມຮູ້ ແລະ ນຳພາສະມາຊິກ ກຊກ ໃນການສັກວັກຊີນປ້ອງກັນພະຍາດສັດ, ສອນການນຳໃຊ້ຢາຕ້ານເຊື້ອໃນການປິ່ນປົວສັດ, ສັກຢາຂ້າແມ່ພະຍາດກາຝາກ ແລະ ສັກຢາບຳລຸງໃຫ້ສັດລ້ຽງ, ພ້ອມທັງຊຸກຍູ້ໃຫ້ສະມາຊິກ ກຊກ ລົງມືຈັດຕັ້ງປະຕິບັດເອງ ເພື່ອເປັນການສ້າງຄວາມເຂັ້ມແຂງໃຫ້ເຂົາເຈົ້າ ສາມາດປະຕິບັດເອງໄດ້ໃນຕໍ່ໜ້າ.





## ຝຶກອົບຮົມເຕັກນິກການລ້ຽງສັດ ໃຫ້ສະມາຊິກ ກຊກ ຢູ່ເມືອງໃໝ່

ໂດຍ: ສັນຕິ ລໍວົງເດືອນ, ຫົວໜ້າທີມ ທລຍ ເມືອງໃໝ່

ໃນລະຫວ່າງວັນທີ 12-21 ມິຖຸນາ 2022 ຜ່ານມາ, ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ປະຈໍາເມືອງ ໃໝ່, ແຂວງຜົ້ງສາລີ ໄດ້ສົມທົບກັບຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ລົງຝຶກອົບຮົມເຕັກນິກການລ້ຽງໝູ, ເປັດ-ໄກ່ ແລະ ແບ້ ໃຫ້ແກ່ສະມາຊິກກຸ່ມຊ່ວຍເຫຼືອກັນແກ້ໄຂຄວາມທຸກຍາກ (ກຊກ) ຈໍານວນ 108 ທ່ານ ທີ່ຖືກຄັດລັດເປັນຄອບຄົວຕົວແບບ ໃນ 24 ບ້ານເປົ້າໝາຍຂຸດທີ 1 ຂອງໂຄງການ ທລຍ ຢູ່ເມືອງໃໝ່.

ຈຸດປະສົງຂອງການຝຶກອົບຮົມໃນຄັ້ງນີ້ ແມ່ນເພື່ອເຮັດໃຫ້ສະມາຊິກ ຄອບຄົວຕົວແບບ ໄດ້ຮຽນຮູ້ ເຕັກນິກວິທີການໃນການລ້ຽງສັດທີ່ຖືກຕ້ອງ, ສາມາດສ້າງລາຍຮັບຈາກຜົນຜະລິດຂອງຕົນ ແລະ ສາມາດຊ່ວຍເຫລືອດ້ານເຕັກນິກໃຫ້ສະມາຊິກ ກຊກ ພາຍໃນບ້ານຂອງຕົນ.

ເຂົ້າຮ່ວມເປັນວິທະຍາກອນ ຝຶກອົບຮົມໃນຄັ້ງນີ້ ໂດຍວິຊາການໜ່ວຍງານລ້ຽງສັດ ຈາກຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ພະນັກງານ ທລຍ ຂັ້ນເມືອງ, ພະນັກງານ ທລຍ ຂັ້ນບ້ານ ລວມທັງໝົດ 8 ທ່ານ, ຍິງ 2 ທ່ານ ແລະ ນັກສໍາມະນາກອນ ຈາກຄອບຄົວຕົວແບບກຸ່ມລ້ຽງໝູ ຈໍານວນ 66 ທ່ານ, ຍິງ 46 ທ່ານ; ກຸ່ມລ້ຽງໄກ່ 13 ທ່ານ, ຍິງ 9 ທ່ານ; ກຸ່ມລ້ຽງເປັດ 7 ທ່ານ, ຍິງ 4 ທ່ານ ລວມຜູ້ເຂົ້າເຂົ້າຮ່ວມທັງໝົດ 108 ທ່ານ, ຍິງ 59 ທ່ານ.

ການຝຶກອົບຮົມໃນຄັ້ງນີ້ ໄດ້ແບ່ງອອກເປັນ 2 ພາກ ຄື: ພາກທິດສະດີ 30% ແລະ ພາກປະຕິບັດຕົວຈິງ 70%. ໃນພາກທິດສະດີ ນັກສໍາມະນາກອນ ໄດ້ຮຽນຮູ້ ການກະກຽມສະຖານທີ່ລ້ຽງ, ການຄັດເລືອກພໍ່ພັນແມ່ພັນ, ການເຮັດອາຫານຕາມສູດເພື່ອຫຼຸດຜ່ອນຕົ້ນທຶນ, ການໃຫ້ອາຫານ, ການເບິ່ງແຍງຮັກສາສຸຂະພາບ ແລະ ການສັກວັກຊິນປ້ອງກັນພະຍາດຕາມລະດູການ. ສ່ວນພາກປະຕິບັດຕົວຈິງ ໄດ້ສາທິດການປະສົມອາຫານຕາມສູດ, ສາທິດການເຮັດອາຫານໝັກແບບປະຫຍັດຕົ້ນທຶນໂດຍນໍາໃຊ້ວັດສະພິດຕາມທ້ອງຖິ່ນທີ່ມີພາຍໃນບ້ານ, ສາທິດວິທີການສັກຢາ, ຢອດຢາວັກຊິນປ້ອງກັນພະຍາດ.

ຜ່ານການຝຶກອົບຮົມເປັນເວລາ 10 ວັນ ເຫັນໄດ້ວ່າ ບັນດານັກສໍາມະນາກອນ ໄດ້ຮຽນຮູ້ເຕັກນິກວິທີການລ້ຽງໝູ, ລ້ຽງໄກ່-ເປັດ ແລະ ລ້ຽງແບ້ ຢ່າງຖືກຕ້ອງຕາມຫຼັກວິຊາການ ແລະ ຈະນໍາເອົາຄວາມຮູ້ທີ່ໄດ້ຈາກການຝຶກອົບຮົມໃນຄັ້ງນີ້ ໄປຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງ ໃຫ້ເກີດດອກອອກຜົນຢ່າງເປັນຮູບປະທໍາ.



## ສຳເລັດການນຳພາເຮັດຕົວຈິງກ່ຽວກັບການຄັດເລືອກຄອບຄົວຕົວແບບ, ການຢ້ຽມຢາມຄົວເຮືອນ, ຢ້ຽມຢາມສວນຄົວຢູ່ 3 ບ້ານ

ໂດຍ: ອ່າງທອງ ບົວໄລວັນ, ໂພຊະນາການເມືອງໜອງແຮດ

ໃນລະຫວ່າງວັນທີ 17-19/3/2022 ຜ່ານມາ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ເມືອງໜອງແຮດ ແຂວງຊຽງຂວາງ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ລົງຕິດຕາມ ແລະ ແນະນຳຂັ້ນຕອນ ແລະ ວິທີກ່ຽວກັບການຄັດເລືອກຄອບຄົວຕົວແບບ, ການຢ້ຽມຢາມຄົວເຮືອນ, ຢ້ຽມຢາມສວນຄົວ ພ້ອມທັງນຳພາສາທິດການເຮັດຕົວຈິງຢູ່ບ້ານຫວ້ຍຂີ້ລີງ, ບ້ານແກ່ວປະຕູ ແລະ ບ້ານປ່າຂີມ, ເມືອງໜອງແຮດ, ແຂວງຊຽງຂວາງ.

ຈຸດປະສົງເພື່ອຊຸກຍູ້ສົ່ງເສີມ ຄະນະ ແລະ ສະມາຊິກ ກຸ່ມໂພຊະນາການບ້ານ ພາຍໃນບ້ານ ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຂັ້ນຕອນການລົງຢ້ຽມຢາມຄົວເຮືອນ ແລະ ສວນຄົວ ກຸ່ມໂພຊະນາການບ້ານ (ກພກ). ໃນການເຂົ້າຮ່ວມລົງຕິດຕາມຄັ້ງນີ້ປະກອບມີ ຫ້ອງການ ທລຍ ສູນກາງ, ຫ້ອງການ ທລຍ ແຂວງ, ຫ້ອງການ ທລຍ ເມືອງ. ນອກນັ້ນ ຍັງມີພະນັກງານ ທລຍ ຂັ້ນບ້ານ ແລະ ສະມາຊິກກຸ່ມໂພຊະນາການ. ລວມຜູ້ເຂົ້າຮ່ວມທັງໝົດ 105 ທ່ານ,ຍິງ 95 ທ່ານ, ຊົນເຜົ່າ 33 ທ່ານ.

ຜ່ານການລົງແນະນຳຂັ້ນຕອນ ແລະ ວິທີກ່ຽວກັບການຄັດເລືອກຄອບຄົວຕົວແບບ, ການຢ້ຽມຢາມຄົວເຮືອນ, ຢ້ຽມຢາມສວນຄົວ ທາງພາກທິດສະດີ ແລະ ການສາທິດຕົວຈິງ ບ້ານລະ 1 ມື້ນັ້ນໄດ້ສ້າງຄວາມເຂົ້າໃຈໃຫ້ພະນັກງານໂພຊະນາການຂັ້ນເມືອງ ແລະ ຂັ້ນບ້ານ ເມືອງໜອງແຮດ, ອົງການປົກຄອງຂັ້ນທ້ອງຖິ່ນ ໂດຍສະເພາະແມ່ນ ຄະນະ ແລະ ສະມາຊິກ ກພກ ພາຍໃນບ້ານມີຄວາມເຂົ້າໃຈກ່ຽວກັບຂັ້ນຕອນການຄັດເລືອກຄອບຄົວຕົວແບບ, ການລົງຢ້ຽມຢາມຄົວເຮືອນ , ການຢ້ຽມຢາມສວນຄົວ, ແລະ ສາມາດນຳເອົາບົດຮຽນທີ່ໄດ້ຈາກການແນະນຳໃນຄັ້ງນີ້ ໄປຜັນຂະຫຍາຍຕໍ່ໃຫ້ແກ່ບ້ານອື່ນໄດ້ ແລະ ວຽກງານຕົວຈິງຂອງຕົນເອງຢ່າງເປັນຮູບປະທຳ.

- **ທີ່ຕັ້ງ ແລະ ພາລະບົດບາດຂອງ ທລຍ**

ກອງທຶນຫຼຸດຜ່ອນຄວາມທຸກຍາກ ຊື່ຫຍໍ້ວ່າ "ທລຍ" ແມ່ນການຈັດຕັ້ງໜຶ່ງພາຍໃຕ້ຄວາມພະຍາຍາມຂອງລັດຖະບານ ເພື່ອໃຫ້ເປັນໂຄງການລິເລີ່ມຂອງລັດຖະບານເພື່ອປະກອບສ່ວນເຂົ້າໃນວຽກງານລຶບລ້າງຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ ຈົນກ້າວເຖິງການຫຼຸດພົ້ນອອກຈາກຄວາມທຸກຍາກໃນຂອບເຂດທົ່ວປະເທດ ທັງເປັນການຜັນຂະຫຍາຍມະຕິຂອງພັກ ແລະ ລັດຖະບານ ໂດຍການກະຈາຍອຳນາດລົງສູ່ທ້ອງຖິ່ນ ເປັນຕົ້ນແມ່ນການມີສ່ວນຮ່ວມຂອງປະຊາຊົນໃນການຕັດສິນໃຈຕໍ່ການພັດທະນາຢູ່ທ້ອງຖິ່ນຂອງເຂົາເຈົ້າ, ທັງເປັນການປະຕິບັດພັນທະສາກົນຂອງຕົນໃນການປະກອບສ່ວນເຂົ້າ ໃນການຈັດຕັ້ງປະຕິບັດຄາດໝາຍສະຫັດສະຫວັດ ເພື່ອການພັດທະນາໃນປີ 2015, ພ້ອມທັງປະກອບເຂົ້າໃນວຽກງານ"ຍຸດທະສາດການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ"ເພື່ອເຮັດໃຫ້ປະເທດເຮົາຫຼຸດພົ້ນອອກຈາກສະພາບປະເທດດ້ອຍພັດທະນາ ໃນປີ 2020.

ກອງທຶນຫຼຸດຜ່ອນຄວາມທຸກຍາກ ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 73/ນຍ, ສະບັບລົງວັນທີ 31 ພຶດສະພາ 2002, ອີງຕາມດຳລັດດັ່ງກ່າວແຕ່ປີ 2003 ຫາ 2006 ທລຍ ເປັນອົງການຈັດຕັ້ງໜຶ່ງທີ່ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ ເພື່ອປະກອບສ່ວນເຂົ້າໃນວຽກງານລຶບລ້າງຄວາມທຸກຍາກ ຕາມກອງປະຊຸມໃຫຍ່ຄັ້ງທີ VII ຂອງສູນກາງພັກ, ຈາກນັ້ນ ໄດ້ມີການດັດແກ້ມາເປັນດຳລັດ ເລກທີ 222/ນຍ ລົງວັນທີ 29 ກັນຍາ 2006 ແລະ ທລຍ 2 ໄດ້ອີງໃສ່ດຳລັດເລກທີ 10/ນຍ, ລົງວັນທີ 10 ມັງກອນ 2012, ອີງຕາມດຳລັດທີ່ໄດ້ດັດແກ້ດັ່ງກ່າວ, ແຕ່ປີ 2007 ຫາ 2016, ທລຍ ເປັນອົງການຈັດຕັ້ງໜຶ່ງທີ່ຂຶ້ນກັບຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ມີຫ້ອງການສູນກາງຢູ່ສຳນັກງານນາຍົກລັດຖະມົນຕີ ແລະ ທລຍ ໄລຍະທີ 3 ແມ່ນອີງຕາມດຳລັດ ເລກທີ 99/ນຍ (ລົງວັນທີ 9 ມີນາ 2017) ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້, ທລຍ ເປັນກົມຈັກທຽບເທົ່າໜ່ວຍວິຊາການລະດັບ 2 ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ນັບແຕ່ປີ 2017 ເປັນຕົ້ນມາ.

- **ພື້ນທີ່ການເຄື່ອນໄຫວວຽກງານ ທລຍ**

ທລຍ ໄລຍະ 1: ປີ 2003-2011 (8 ປີ)ໄດ້ເຄື່ອນໄຫວວຽກງານຢູ່ 8 ແຂວງ (ຫຼວງນ້ຳທາ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ,ຈຳປາສັກ, ເຊກອງ ແລະ ອັດຕະປື, ສະເພາະ ແຂວງອັດຕະປືແມ່ນ ເຂົ້າປີ 2011), 28 ເມືອງທຸກຍາກ, 309 ກຸ່ມບ້ານ, 2.185 ບ້ານ ແລະ ກວມເອົາປະຊາກອນຫຼາຍກວ່າ 909.000 ກວ່າຄົນ.

ທລຍ ໄລຍະທີ 2: ແຕ່ປີ 2012-2016 (5 ປີ) ໄດ້ກວມເອົາ 10 ແຂວງ, 42 ເມືອງທຸກຍາກ, 278 ກຸ່ມບ້ານ 1.951 ບ້ານ ແລະ ກວມເອົາປະຊາກອນ ຫຼາຍກວ່າ 891.000 ຄົນ. ແຂວງຈຳປາສັກ ໄດ້ຖືກ ຖອນອອກໃນປີ 2011 ແລະ ເພີ່ມແຂວງ ອຸດົມໄຊ, ຫຼວງພະບາງ ແລະ ຜົ້ງສາລີເຂົ້າຕື່ມໃນປີ 2012.

ທລຍ ໄລຍະ 3: ແຕ່ປີ 2017-2020 (4 ປີ) ໄດ້ກວມເອົາພື້ນທີ່ເປົ້າໝາຍ 10 ແຂວງ, 43 ເມືອງ, 263 ກຸ່ມບ້ານ, 1.820 ບ້ານ ແລະ ກວມເອົາປະຊາກອນຫຼາຍກວ່າ 850.000 ຄົນ.

ສະຫຼຸບລວມ: ປີ 2003 - 2020 ທລຍ ໄດ້ເຄື່ອນໄຫວວຽກງານທັງໝົດຢູ່ 11 ແຂວງຄື: ແຂວງຫຼວງນ້ຳທາ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ,ຈຳປາສັກ, ເຊກອງ, ອັດຕະປື, ອຸດົມໄຊ, ຜົ້ງສາລີ ແລະ ແຂວງຫຼວງພະບາງ. ກວມເອົາ 2.841 ບ້ານ, 413 ກຸ່ມບ້ານ, 55 ເມືອງ, ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 1.3 ລ້ານຄົນ

ທລຍ 3 ໄລຍະທຶນເພີ່ມຕື່ມ: 2020-2024 (4 ປີ) ໄດ້ກວມເອົາ 12 ເມືອງ, 465 ບ້ານ, 4 ແຂວງ (ຜົ້ງສາລີ, ຫົວພັນ, ອຸດົມໄຊ ແລະ ຊຽງຂວາງ)


**ຄະນະຮັບຜິດຊອບ**

ທ່ານ ນາງ ບົວລີ ໄຊຍະວົງ

ທ່ານ ທອງເງິນ ສະເດັດຕັນ

ທ່ານ ສົມສັກ ຈັນດາລາ

ທ່ານ ແສງເພັດ ວັນນະວົງ

ທ່ານ ປອ. ທັດທະຈັນ ພົມພັນທະວົງ

**ຄະນະບັນນາທິການ**

ທ່ານ ພັດນະຄອນ ຄັນທະມີໄຊ

ທ່ານ ປອ. ວົງປະພັນ ມະນີວົງ

**ອອກແບບ ແລະ ຈັດໜ້າ**

ທ່ານ ແສງອາລຸນ ພິລາຈັນ



ຕິດຕໍ່ ແລະ ຕິດຕາມພວກເຮົາໄດ້ທີ່:

ໂທ: 021 261 479 - 80, ອີເມວ: **info@prf.org**

ເວບໄຊ: **www.prflaos.org,** ເຟສບຸກ: **Prf Fund**


THE WORLD BANK
IBRD • IDA